ໂຄງການຊຸດກອງປະຊຸມຄຸນໝິງ ວ່າດ້ວຍການຮ່ວມມືດ້ານການສຶກສາ ຂອງອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ ຄັ້ງທີ 6

ການຖັກທໍສານຝັນ ແລະ ການປັກແສ່ວແມ່ນ້ຳ ແລະ ພູເຂົາ

——ຫ້ອງປະຕິບັດງານດ້ານມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ ຂອງເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ, ມະຫາວິທະຍາໄລຊິນເຜົ່າຢຸນນານ

ຊຸດສຳມະນາການສົ່ງເສີມງານສິນລະປະ ແລະ ນະວັດຕະກຳ ການຍ້ອມ, ການຖັກທໍ ແລະ ການປັກແສ່ວ ເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ປີ 2023

# ຄູ່ມືການສະໝັກຮຽນ

## I. ຄວາມເປັນມາຂອງການຈັດຕັ້ງປະຕິບັດໂຄງການ

ເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ມີຄວາມອຸດົມໄປດ້ວຍແຫຼ່ງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ (Intangible cultural resources), ເພື່ອເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ການປົກປັກຮັກສາ, ສືບທອດ ແລະ ແລກປ່ຽນພົວພັນ ດ້ານມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ (Intangible cultural heritage) ຂອງຊາດ ພາຍໃນພາກພື້ນ, ພາຍໃຕ້ການສະໜັບສະໜຸນທຶນພິເສດສຳລັບການຮ່ວມມືອາຊີ ຂອງກະຊວງສຶກສາທິການ, ມະຫາວິທະຍາໄລຊົນເຜົ່າຢຸນນານ ຊຸດສຳມະນາການສົ່ງເສີມງານສິນລະປະ ແລະ ນະວັດຕະກຳການຍ້ອມ, ການຖັກທໍ ແລະ ການປັກແສ່ວ ເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ປີ 2023 ໄດ້ຮັບການຈັດຂຶ້ນ, ໂດຍຖືເອົາ "ຫ້ອງປະຕິບັດງານດ້ານມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ ເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ" ເປັນເວທີ, ເພື່ອມຸ່ງໜ້າສູ່ 6 ປະເທດໃນເຂດລຸ່ມແມ່ນ້ຳ.

ສຳລັບຊຸດສຳມະນາໃນຄັ້ງນີ້ ຖືເອົາການເປີດດ້ວຍງານຫັດຖະກຳ "ການປັກແສ່ວ, ການຍ້ອມ ແລະ ການຖັກທໍ", ດຳເນີນການຍົກລະດັບດ້ານແນວຄວາມຄິດ ແລະ ແລກປ່ຽນພົວພັນ ດ້ານທັກສະສິນລະປະຂອງງານຫັດຖະກຳການປັກແສ່ວ, ການຖັກທໍ

ແລະ ການພິມ-ຍ້ອມ ຂອງ 6 ປະເທດຕາມແຄມຝັ່ງ, ສ້າງເວທີການປົກປັກຮັກສາ ການສືບທອດ ແລະ ປ່ອງຢ້ຽມແຫ່ງການພົວພັນແລກປ່ຽນ ສຳລັບງານຫັດຖະກຳພື້ນເມືອງຂອງຊົນເຜົ່າກຸ່ມນ້ອຍ ໃນເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ. ເຊິ່ງໂຄງການດັ່ງກ່າວນີ້ໄດ້ຮັບການລວມເຂົ້າຢູ່ໃນຊຸດໂຄງການ "ກອງປະຊຸມຄູນໜຶ່ງວ່າດ້ວຍການຮ່ວມມືດ້ານການສຶກສາຂອງອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ ຄັ້ງທີ 6" ໂດຍພະແນກສຶກສາທິການແຂວງຢຸນນານ.

## II. ແນະນຳກ່ຽວກັບພາກສ່ວນຮັບຜິດຊອບຫຼັກ

ມະຫາວິທະຍາໄລຊົນເຜົ່າຢຸນນານ ເປັນມະຫາວິທະຍາໄລໜຶ່ງທີ່ມີຄວາມຄົບຖ້ວນໃນການກໍ່ສ້າງບຸກຄະລາກອນວິຊາຊີບລະດັບສູງທຸກເຊື້ອຊາດ, ເປັນມະຫາວິທະຍາໄລສຳຄັນປະຈຳແຂວງ ທີ່ຮ່ວມສ້າງຕັ້ງຂຶ້ນໂດຍກະຊວງສຶກສາທິການ, ຄະນະກຳມາທິການວຽກງານຊົນເຜົ່າຂອງລັດ ແລະ ອຳນາດການປົກຄອງແຂວງຢຸນນານ. ມະຫາວິທະຍາໄລແຫ່ງນີ້ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 1 ສິງຫາ 1951, ເຊິ່ງເປັນໜຶ່ງໃນບັນດາສະຖາບັນການສຶກສາຊັ້ນສູງຊົນເຜົ່າທີ່ມີການກໍ່ຕັ້ງຂຶ້ນ ຂອງ ສປ ຈີນ, ນັບມາເຖິງປະຈຸບັນກໍ່ໄດ້ມີປະຫວັດຄວາມເປັນມາເຖິງ 72 ປີແລ້ວ. ໃນປະຈຸບັນ ມະຫາວິທະໄລແຫ່ງນີ້ມີນັກສຶກສາລະດັບປະລິນຍາຕີ, ປະລິນຍາໂທ, ປະລິນຍາເອກ ແລະ ນັກສຶກສາຕ່າງປະເທດ ລວມທັງໝົດປະມານ 34000 ຄົນ, ໄດ້ກາຍເປັນມະຫາວິທະຍາໄລສົມບູນແຫ່ງໜຶ່ງທີ່ກວມເອົາສາຂາວິຊາທີ່ຫຼາກຫຼາຍ ແລະ ລັກສະນະການດຳເນີນງານຂອງໂຮງຮຽນທີ່ໂດດເດັ່ນ, ເຊິ່ງກວມເອົາ 10 ສາຂາວິຊາ ໄດ້ແກ່ ສາຂາປັດຊະຍາ, ເສດຖະສາດ, ກົດໝາຍ, ການສຶກສາ, ວັນນະຄະດີ, ປະຫວັດສາດ, ວິທະຍາສາດ, ວິສະວະກຳ, ການບໍລິຫານຈັດການ ແລະ ສິນລະປະ, ເຊິ່ງໄດ້ກໍ່ເກີດເປັນຄວາມໄດ້ປຽບ ແລະ ລັກສະນະເດັ່ນ ດ້ານຊົນເຜົ່າວິທະຍາ, ສັງຄົມວິທະຍາ, ພາສາ ແລະ ວັນນະຄະດີ ຊົນເຜົ່າ, ພາສາ ແລະ ວັດທະນະທຳ ຂອງອາຊີຕາເວັນອອກສຽງໃຕ້ ແລະ ອາຊີໃຕ້, ແລະ ຮູບແບບສາຂາວິຊາຊີບທີ່ສາຂາສິນລະປະສາດ ແລະ ວິທະຍາສາດ ມີຄວາມສຳຄັນເທົ່າທຽມກັນ, ການພັດທະນາປະສົມປະສານກັນຂອງຫຼາຍສາຂາວິຊາ.

ມະຫາວິທະຍາໄລ ໃຫ້ຄວາມສຳຄັນກັບການຮ່ວມມື ແລະ ການແລກປ່ຽນພົວພັນລະຫວ່າງປະເທດເປັນຢ່າງຍິ່ງ, ອັນເປັນປ່ອງຢ້ຽມສຳຄັນຂອງການເປີດປະຕູສູ່ພາຍນອກ

ຂອງແຂວງຢຸນນານ ແລະ ປະເທດຊາດ. ນັບຕັ້ງແຕ່ກໍ່ຕັ້ງມະຫາວິທະຍາໄລເປັນຕົ້ນມາ, ໄດ້ມີປະມຸກລັດ, ບຸກຄົນສຳຄັນຂອງລັດຖະບານ, ຜູ້ຊ່ຽວຊານ, ນັກຮຽນຮູ້ ແລະ ໝູ່ເພື່ອນນານາຊາດ ຈຳນວນ 100.000 ກວ່າເທື່ອຄົນ ຈາກ 80 ກວ່າປະເທດ ແລະ ພາກພື້ນ ທີ່ໄດ້ມາຢ້ຽມຢາມມະຫາວິທະຍາໄລຊົນເຜົ່າຢຸນນານ, ເຊັ່ນ: ສົມເດັດ ພະລາຊິນີ ອີລີຊາເບັດ ທີ II ແຫ່ງ ສະຫະຣາຊະອານາຈັກ ອັງກິດ, ດຣ. ເຮນຣີ ຄິສຊິງເກີອະດີດລັດຖະມົນຕີການຕ່າງປະເທດ ສະຫະລັດອາເມຣິກາ, ເຈົ້າຊີວິດ ຮາຣັລດ໌ ທີ V (Harald V) ແຫ່ງ ຣາຊະອະນາຈັກ ນໍອກແວ, ທ່ານ ໂຮຈິມິນ ປະທານປະເທດ ສສ ຫວຽດນາມ ເປັນຕົ້ນ, ແລະ ໄດ້ໃຫ້ການປະເມີນຜົນທີ່ດີ.

**III. ຮູບແບບ ແລະ ເນື້ອໃນ ຂອງຊຸດສຳມະນາ**

ໂຄງການນີ້ມີແຜນທີ່ຈະຈັດຂຶ້ນໃນຊ່ວງເດືອນຕຸລາ-ພະຈິກ 2023, ເຊິ່ງໄລຍະເວລາຂອງການຝຶກອົບຮົມຄື 10 ວັນ. ລາຍລະອຽດຂອງວາລະການຝຶກອົບຮົມມີການກຳນົດຊົ່ວຄາວດັ່ງນີ້:

ໄລຍະທີ 1: ການຮັບສະໝັກ ແລະ ຄັດເລືອກ. ໃນລະຫວ່າງວັນທີ 10 ສິງຫາ ຈົນເຖິງວັນທີ 20 ກັນຍາ 2023, ດຳເນີນການວຽກງານໂຄສະນາປະຊາສຳພັນ, ຄັດເລືອກສຳມະນາກອນ ແລະ ສິ່ງໜັງສືເຊື້ອເຊີນ.

ໄລຍະທີ 2: ການກະກຽມໃນເບື້ອງຕົ້ນ. ໃນລະຫວ່າງວັນທີ 20 ກັນຍາ ຫາວັນທີ 10 ພະຈິກ 2023, ນັກຮຽນດຳເນີນຂັ້ນຕອນການເຂົ້າປະເທດ ເຊັ່ນ: ການຍື່ນເຮັດໜັງສືເດີນທາງ ແລະ ວີຊາ ເປັນຕົ້ນ, ລວມເຖິງການກະກຽມຜົນງານຫັດຖະກຳໜຶ່ງຊຸດ ເພື່ອນຳໄປຍັງການສຳມະນາ ເພື່ອດຳເນີນການແລກປ່ຽນ ແລະ ຈັດສະແດງ (ຜົນງານຫັດຖະກຳດັ່ງກ່າວ ສາມາດເປັນຜົນງານສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ, ເຊິ່ງຈະດຳເນີນການໃຫ້ສຳເລັດສົມບູນ ໃນລະຫວ່າງໄລຍະການສຳມະນາ ໂດຍຢູ່ພາຍໃຕ້ການຊີ້ນຳຂອງຜູ້ຊ່ຽວຊານ).

ໄລຍະທີ 3: ໃນລະຫວ່າງວັນທີ 11 ພະຈິກ ~14 ພະຈິກ 2023, ຈັດພິທີເປີດຊຸດສຳມະນາ ແລະ ການສອນແບບເລັ່ງລັດເຂັ້ມຂຸ້ນ ຢູ່ທີ່ມະຫາວິທະຍາໄລຊົນເຜົ່າຢຸນນານ, ນະຄອນຄຸນໝິງ, ແຂວງຢຸນນານ, ສປ ຈີນ. ຫຼັກສູດວິຊາຫຼັກ: "ການເຊື່ອມສານຫັດຖະກຳຊົນເຜົ່າ ໃນການຟື້ນຟູວັດທະນະທຳຊົນນະບົດ", "ການສຶກສາຮຽນຮູ້ສິນລະປະເຕັກນິການຍ້ອມຜ້າ", "ແນວຄວາມຄິດການອອກແບບ ແລະ ການປະຕິບັດນະວັດຕະກຳ", "ລັກສະນະທາງວັດທະນະທຳ ໃນງານສິນລະປະຫັດຖະກຳເຄື່ອງແຕ່ງກາຍ", "ການ

ແລກປ່ຽນ ແລະ ສະແດງ ຜົນງານຂອງຜູ້ສືບທອດຫັດຖະກຳການຍ້ອມ, ຖັກທໍ ແລະ ປັກແສ່ວ" ແລະ "ການອອກແບບພາບຂອງມໍລະດົກທາງວັດທະນະທຳທີ່ບໍ່ມີຕົວຕົນ" ເປັນຕົ້ນ.

ໄລຍະທີ 4: ໃນລະຫວ່າງວັນທີ 15 ພະຈິກ 2023 ຫາວັນທີ 17 ພະຈິກ 2023, ເດີນທາງໄປຍັງມະຫາວິທະຍາໄລເວີນຊານ ເພື່ອຝຶກອົບຮົມພາກປະຕິບັດ ແລະ ແລກປ່ຽນກ່ຽວກັບງານປັກແສ່ວຊົນເຜົ່າຈ້ວງ, ງານຫັດຖະກຳເຄື່ອງນຸ່ງຂອງຊົນເຜົ່າອີ້ ແລະ ງານຫັດຖະກຳການຍ້ອມພິມລາຍຜ້າດ້ວຍຂີ້ເຜີ້ງຂອງຊົນເຜົ່າມົ້ງ.

ໄລຍະທີ 5: ໃນວັນທີ 18 ພະຈິກ 2023 ນັກສຳມະນາກອນ ສື່ສານກັບອາຈານທີ່ປຶກສາ ແລະ ໄດ້ຮັບການແນະນຳຈາກຜູ້ຊ່ຽວຊານ, ໃນທີ່ສຸດກໍ່ຈະສຳເລັດຜົນງານຫັດຖະກຳການຍ້ອມ, ການຖັກທໍ ແລະ ປັກແສ່ວ 1 ຢ່າງ, ເຊິ່ງຜົນງານຈະໄດ້ຮັບການເກັບຮັກສາໄວ້ໂດຍ "ຫ້ອງປະຕິບັດງານດ້ານມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ ເຂດລຸ່ມແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ", ແລະ ມອບໃບຮັບຮອງການເກັບຮັກສາ.

ໄລຍະທີ 6: ໃນວັນທີ 19 ພະຈິກ 2023 ງານວາງສະແດງຜົນງານຂອງນັກຮຽນ ຈະໄດ້ຮັບການຈັດຂຶ້ນຢູ່ທີ່ ເຂດນິຄົມວັດທະນະທຳ ແລະ ແນວຄິດສ້າງສັນ ເສີນລີ ໃນເຂດຕອນຄຸນໝິງ ຂອງເຂດທົດລອງການຄ້າເສລີ.

### IV. ທີມງານອາຈານ

ໂຄງການນີ້ໄດ້ມອບໝາຍໃຫ້ທີມງານອາຈານຊັ້ນໜຶ່ງ ແລະ ຊັບພະຍາກອນການຮຽນການສອນຂອງຄະນະວິຊາຊີບນານາຊາດ ຂອງມະຫາວິທະຍາໄລຊົນເຜົ່າຢຸນນານ, ລວບລວມເອົາຜູ້ສືບທອດມໍລະດົກທາງວັດທະນະທຳທີ່ບໍ່ມີຕົວຕົນລະດັບຊາດຂອງຈີນ, ອາຈານສອນທີ່ມີຊື່ສຽງ ແລະ ອາຈານຜູ້ຊ່ຽວຊານດ້ານງານສິນລະປະຫັດຖະກຳ ຈາກຄະນະສິນລະປະ ຂອງມະຫາວິທະຍາໄລຊິງຫົວ, ມະຫາວິທະຍາໄລຕົງຫົວ, ມະຫາວິທະຍາໄລສິນລະປະຢຸນນານ, ມະຫາວິທະຍາໄລເວີນຊານ, ມະຫາວິທະຍາໄລສິນລະປະກວາງຊີ ແລະອື່ນໆ ເພື່ອນຳເອົາຫຼັກສູດວິຊາ ແລະ ປະສົບການ ທີ່ດີທີ່ສຸດຖ່າຍທອດໃຫ້ແກ່ນັກຮຽນ.

### V. ລະບຽບການສຳລັບການປະເມີນຄະແນນ

ການປະເມີນຄະແນນ ສ່ວນໃຫຍ່ແມ່ນແນໃສ່ການໃຫ້ຄະແນນຕໍ່ຄຸນນະພາບຂອງການຈົບຫຼັກສູດຂອງນັກຮຽນເປັນຫຼັກ, ເຊິ່ງມາດຕະຖານລະອຽດ (ຄິດໄລ່ເປັນສ່ວນຮ້ອຍ) ຄື: ການເຂົ້າຮຽນກວມເອົາ 20%; ຜົນງານການປະດິດສ້າງໃນແຕ່ລະໄລຍະ (ພາບຮ່າງ,

ແຜນງານ, ການວາງສະແດງ ເປັນຕົ້ນ) ກວມເອົາ 30%; ຜົນງານການປະດິດສ້າງສຸດທ້າຍທີ່ສໍາເລັດ ກວມ 30%; ເຂົ້າຮ່ວມການວາງສະແດງ ກວມ 20%. ພາຍຫຼັງຜ່ານການປະເມີນ ແລະ ກວດສອບຜ່ານແລ້ວ, ກໍ່ຈະໄດ້ຮັບ "ໃບຢັ້ງຢືນຈົບຫຼັກສູດ" ທີ່ອອກໃຫ້ໂດຍ ມະຫາວິທະຍາໄຊຊິນເຜົ່າຢຸນນານ.

## VI. ການເລືອກເປົ້າໝາຍສະໝັກຮຽນ

ໂຄງການນີ້ດໍາເນີນການຕາມຫຼັກການເປີດກວ້າງ, ຍຸຕິທໍາ ແລະ ເປັນກາງ ໃນການປະກາດຮັບສະໝັກນັກຮຽນຈາກປະເທດກໍາປູເຈຍ, ລາວ, ມຽນມາ, ໄທ ແລະ ຫວຽດນາມ, ໂດຍໃຊ້ວິທີການຂອງການຍື່ນສະໝັກລາຍບຸກຄົນ, ການພິຈາລະນາຈາກຜູ້ຊ່ຽວຊານ ແລະ ເລືອກຮັບເອົາຜູ້ທີ່ດີທີ່ສຸດ ດໍາເນີນການຄັດເລືອກ, ໃນທີ່ສຸດຄັດເລືອກເອົານັກຮຽນຈໍານວນ 20 ຄົນ. ນັກຮຽນທີ່ໄດ້ຮັບຄັດເລືອກ ແມ່ນຊ່າງຫັດຖະກໍາໃນຂະແໜງການທີ່ກ່ຽວຂ້ອງກັບການຍ້ອມ, ການຖັກທໍ ແລະ ການປັກແສ່ວ ຫຼື ເປັນບຸກຄະລາກອນໄວໜຸ່ມ ແລະ ໄວກາງຄົນ ທີ່ມີຄວາມສາມາດດ້ານງານສິນລະປະ ທີ່ປະສົບຄວາມສໍາເລັດໃນງານຄົ້ນຄວ້າທີ່ກ່ຽວຂ້ອງກັບການຍ້ອມ, ການຖັກທໍ ແລະ ການປັກແສ່ວ, ເຊິ່ງອາຍຸບໍ່ເກີນ 55 ປີ. ຜູ້ທີ່ມີຝີມືຫັດຖະກໍາລະດັບແນວໜ້າ ໃນຂະແໜງການທີ່ກ່ຽວຂ້ອງກັບການຍ້ອມ, ການຖັກທໍ ແລະ ການປັກແສ່ວ ຈະໄດ້ຮັບການພິຈາລະນາເປັນພິເສດ; ຜູ້ທີ່ມີຄວາມສາມາດໃນການດໍາເນີນການແລກປ່ຽນສື່ສານ ແລະ ສິດສອນຖ່າຍທອດທັກສະ ໃຫ້ແກ່ຜູ້ຝຶກຫັດຂັ້ນຕົ້ນໃນຂະແໜງການຂອງປະເທດຕົນ ພາຍຫຼັງຜ່ານການຝຶກອົບຮົມນີ້ ຈະໄດ້ຮັບພິຈາລະນາເປັນພິເສດ; ແມ່ຍິງຈະໄດ້ຮັບພິຈາລະນາເປັນພິເສດ. (ຖ້າຫາກທ່ານມີພະຍາດປະຈໍາຕົວ ແມ່ນຕ້ອງໄດ້ຕິດຕໍ່ສື່ສານກັບຜູ້ຈັດງານລ່ວງໜ້າ ເພື່ອພິຈາລະນາວ່າທ່ານສາມາດເຂົ້າຮ່ວມການຝຶກອົບຮົມໄດ້ຫຼືບໍ່)

## VII. ຄ່າໃຊ້ຈ່າຍໃນການຝຶກອົບຮົມ

ໂຄງການນີ້ແມ່ນໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກກອງທຶນພິເສດເພື່ອການຮ່ວມມືທະວີບອາຊີ ຂອງກະຊວງສຶກສາທິການ, ງົບປະມານກອງປະຊຸມຄຸນໝິງ ວ່າດ້ວຍການຮ່ວມມືດ້ານການສຶກສາຂອງອາຊີໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ ຄັ້ງທີ 6 ແລະ ງົບປະມານທີ່ລະດົມທຶນດ້ວຍຕົນເອງຂອງມະຫາວິທະຍາໄລເວີນຊານ. ໂຄງການຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການເດີນທາງໄປ-ກັບ, ຄ່າທີ່ພັກ ແລະ ອາຫານໃນລະຫວ່າງການ

ຝຶກອົບຮົມ ແລະ ຄ່າຮຽນ ຂອງນັກຮຽນທີ່ເຂົ້າຮ່ວມການຝຶກອົບຮົມ. ສ່ວນຄ່າໃຊ້ຈ່າຍໃນການດໍາເນີນການຍື່ນເຮັດໜັງສືຜ່ານແດນ ແລະ ວີຊ່າ ແມ່ນຮັບຜິດຊອບໂດຍນັກຮຽນເອງ.

**VIII. ວິທີການສະໝັກ**

(1) ສໍາລັບນັກຮຽນທີ່ສົນໃຈສະໝັກຮຽນ ໃຫ້ຕື່ມແບບຟອມສະໝັກ, ແລ້ວສົ່ງແບບຟອມສະໝັກ ແລະ ພາບຖ່າຍຜົນງານຕົວແທນຂອງຕົນ ມາຍັງທີ່ຢູ່ອີເມວ ynmdlmxy@ymu.edu.cn ກ່ອນວັນທີ 20 ກັນຍາ 2023. ໝາຍເຫດ: ແນະນໍາໃຫ້ຕື່ມແບບຟອມສະໝັກ ດ້ວຍແບບຟອມເອເລັກໂທຣນິກ, ຖ້າຫາກຕື່ມດ້ວຍການຂຽນ, ກະລຸນາກວດສອບລະອຽດວ່າຕົວໜັງສືຈະແຈ້ງ.

(2) ກ່ອນການຝຶກອົບຮົມ ນັກຮຽນຕ້ອງໄດ້ກະກຽມວັດສະດຸສໍາເລັດຮູບ ຫຼື ເຄິ່ງສໍາເລັດຮູບ ສໍາລັບງານຫັດຖະກໍາທີ່ກ່ຽວຂ້ອງກັບການຍ້ອມ, ການຖັກທໍ ແລະ ການປັກແສ່ວ ເພື່ອເປັນການກະກຽມສໍາລັບການເກັບລວບລວມ ແລະ ວາງສະແດງຜົນງານຂອງໂຄງການ.

(3) ສອບຖາມກ່ຽວກັບການສະໝັກສາມາດຕິດຕໍ່ກັບຄະນະກໍາມະການຈັດງານ ຜ່ານທາງ ynmdlmxy@ymu.edu.cn ໄດ້.

(4) ສໍາລັບລາຍລະອຽດກະລຸນາສອບຖາມ

ທ່ານສາມາດດາວໂຫຼດແບບຟອມສະໝັກທີ່ກ່ຽວຂ້ອງໄດ້ຕາມລິ້ງນີ້,
http://ynat.ynni.edu.cn/web/74817/showartical?ArticalId=98ccf065-3996-47e7-a1e1-c68d496c8e50

**ແບບຟອມສະໝັກເຂົ້າຮ່ວມຊຸດສຳມະນາການສົ່ງເສີມງານສິນລະປະ ແລະ ນະວັດຕະກຳ ການຍ້ອມ, ການຖັກທໍ ແລະ ການປັກແສ່ວ ເຂດລຸ່ມແມ່ນໍ້າລ້ານຊ້າງ-ແມ່ນໍ້າຂອງ ປີ 2023 ທີ່ຫ້ອງປະຕິບັດງານດ້ານມໍລະດົກທາງວັດທະນະທຳທີ່ຈັບຕ້ອງບໍ່ໄດ້ ເຂດລຸ່ມແມ່ນໍ້າລ້ານຊ້າງ-ແມ່ນໍ້າຂອງ, ມະຫາວິທະຍາໄລຊົນເຜົ່າຢຸນນານ**

<table>
<tr><td>ຊື່ ແລະ ນາມສະກຸນ</td><td></td><td>ເພດ</td><td></td><td>ວັນເດືອນປີເກີດ</td><td></td><td rowspan="2">ຮູບຖ່າຍ</td></tr>
<tr><td>ລະດັບການສຶກສາສູງສຸດ</td><td></td><td>ສາຂາວິຊາ</td><td></td><td>ອາຊີບ</td><td></td></tr>
<tr><td>ໝາຍເລກໜັງສືຜ່ານແດນ</td><td colspan="3"></td><td>ອີເມວ</td><td colspan="2"></td></tr>
<tr><td>ສັງກັດບ່ອນເຮັດວຽກ/ບ່ອນຮຽນ</td><td colspan="3"></td><td>ເບີມືຖື/ໂທລະສັບ</td><td colspan="2"></td></tr>
<tr><td>ຄວາມສາມາດງານຫັດຖະກຳ</td><td colspan="6"></td></tr>
<tr><td>ປະສົບການທີ່ກ່ຽວຂ້ອງກ່ຽວກັບງານສິນລະປະ ແລະ ວັດທະນະທຳ</td><td colspan="6"></td></tr>
<tr><td>ອະທິບາຍກ່ຽວກັບລະດັບພາສາຕ່າງປະເທດ</td><td colspan="6">ພາສາອັງກິດ ☐ ດີເລີດ ☐ ຄ່ອງແຄ້ວ ☐ ເບື້ອງຕົ້ນ ☐ ບໍ່ໄດ້<br>ພາສາຈີນ ☐ ດີເລີດ ☐ ຄ່ອງແຄ້ວ ☐ ບໍ່ໄດ້<br>ພາສາອື່ນໆ ____________________<br>☐ ດີເລີດ ☐ ຄ່ອງແຄ້ວ ☐ ເບື້ອງຕົ້ນ ☐ ບໍ່ໄດ້</td></tr>
<tr><td>ຄຳຄິດເຫັນຂອງອົງກອນທີ່ແນະນຳ</td><td colspan="6"></td></tr>
<tr><td>ລາຍເຊັນ</td><td colspan="3"></td><td>ວັນທີ</td><td colspan="2"></td></tr>
</table>